ປົດຂ່າວ

UNDP
Empowered lives.
Resilient nations.

# ປະເທດອິດສະຕຣາລີ ປະກາດໃຫ້ທຶນເພີ່ມຕື່ມ ເພື່ອເກັບກູ້ລະເບີດ ບໍ່ທັນແຕກ ຢູ່ແຂວງອັດຕະປື

**ນະຄອນວຽງຈັນ, 27 ມິຖຸນາ 2019** – ລັດຖະບານ ອິດສະຕາລີ ເພີ່ມການປະກອບສ່ວນ ຕໍ່ວຽກງານເກັບກູ້ລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ເຂດນ້ຳຖ້ວມໃນປີຜ່ານມາ ຢູ່ແຂວງ ອັດຕະປື ເພື່ອຮັບປະກັນຄວາມປອດໄພຂອງປະຊາ ຊົນທ້ອງຖິ່ນ ທີ່ຖືກຍົກຍ້າຍ ຍ້ອນນ້ຳຖ້ວມ.

ລັດຖະບານ ອິດສະຕາລີ ຫາກໍໄດ້ປະກາດໃຫ້ທຶນ 407,000 ໂດລາອິດສະຕຣາລີ (291,000 ໂດລາສະຫະລັດ ຫຼື 2,5 ຕື້ກີບ ) ເພື່ອເກັບກູ້ລະເບີດບໍ່ທັນແຕກທີ່ຍັງຕົກຄ້າງຢູ່ແຂວງ ອັດຕະປື. ເລີ່ມຈາກເດືອນ ກັນຍາ 2018 ເປັນຕົ້ນມາ, ການປະກອບທຶນຂັ້ນຕົ້ນ ມູນຄ່າ 200,000 ໂດລາອິດສະຕາລີ ໄດ້ອຳນວຍຄວາມສະດວກໃນການສົ່ງທີມງານເກັບກູ້ລະເບີດ ບໍ່ທັນແຕກຂອງ UXO Lao ເພີ່ມຕື່ມອີກຫ້າທີມ ໄປເມືອງສະໜາມໄຊ, ແຂວງອັດຕະປື ເພື່ອສະໜັບສະໜູນການແກ້ໄຂຜົນສະທ້ອນ ໄພນ້ຳຖ້ວມ ຜ່ານການເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງເພື່ອຍົກຍ້າຍສຸກເສີນ ແລະ ຈັດທີ່ຢູ່ອາໄສຖາວອນໃຫ້ ປະຊາຊົນ ຜູ້ຮັບຜົນກະທົບຈາກນ້ຳຖ້ວມ. ການສະໜອງທຶນເພີ່ມຕື່ມນີ້ຈະເຮັດໃຫ້ ການສະໜອງທຶນຊ່ວຍເຫຼືອ ທັງໝົດຂອງປະເທດອິດສະຕຣາລີ ສຳລັບການເກັບກູ້ລະເບີດບໍ່ທັນແຕກ ກາຍເປັນ 607,000 ໂດລາອິດສະຕຣາລີ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳຂອງປະເທດອິດສະຕຣາລີ ແກ່ແຂວງອັດຕະປື ກາຍເປັນ 3.4 ລ້ານໂດລາອິດສະຕຣາລີ.

ແຂວງອັດຕະປື ເປັນແຂວງໜຶ່ງທີ່ມີລະເບີດບໍ່ທັນແຕກທີ່ຕົກຄ້າງຫຼາຍທີ່ສຸດ ຢູ່ໃນ ສປປ ລາວ. 94 ເປີເຊັນຂອງບ້ານຕ່າງໆຢູ່ແຂວງ ອັດຕະປື ແມ່ນມີລະເບີດບໍ່ທັນແຕກທີ່ຍັງຕົກ ຄ້າງຈາກສະໄໝສົງຄາມ. ຫຼັງນ້ຳຖ້ວມ, ຄວາມສ່ຽງກ່ຽວກັບລະເບີດບໍ່ທັນແຕກແມ່ນສູງຂຶ້ນໃນເຂດທີ່ຖືກນ້ຳຖ້ວມ ເນື່ອງຈາກວ່າລະເບີດບໍ່ທັນແຕກ ອາດຈະຖືກເຄື່ອນຍ້າຍຍ້ອນນ້ຳ. ທ່ານເຈົ້າແຂວງໆ ອັດຕະປື ໄດ້ສະເໜີ ໃຫ້ UXO Lao ສົ່ງທີມງານເກັບກູ້ລະເບີດໄປປະຈຳການຢູ່ເມືອງສະໜາມໄຊ.

ການປະເມີນຄວາມສ່ຽງຫຼັງເກີດໄພພິບັດ ໄດ້ປະເມີນຄ່າໃຊ້ຈ່າຍທັງໝົດທີ່ຕ້ອງການສຳລັບການຟື້ນຟູຫຼັງນ້ຳຖ້ວມໃນຂະແໜງການ ລະເບີດບໍ່ທັນແຕກ ແມ່ນຢູ່ທີ່ 92,6 ລ້ານ ໂດລາສະຫະລັດ ຈາກຕົວເລກຄວາມຕ້ອງການທັງໝົດ ເຊິ່ງເທົ່າກັບ 520 ລ້ານ ໂດລາສະຫະລັດ. ນີ້ເປັນສັດສ່ວນທີ່ຫຼາຍທີ່ສຸດເປັນອັນດັບສອງຮອງ ຈາກຂະແໜງການໂຍທາ.

ທຶນຂ້ອງໃໝ່ດັ່ງກ່າວຈະຊ່ວຍປະກອບສ່ວນດ້ານງົບປະມານທີ່ຕ້ອງການສຳລັບການຟື້ນຟູ ແລະ ການກໍ່ສ້າງຄືນ ຕາມການປະເມີນຄວາມຕ້ອງການຫຼັງໄພພິບັດ ແລະ ຈະຮອງຮັບການປະຕິບັດວຽກງານເກັບກູ້ຂອງຫ້າທີມງານຂອງ UXO Lao ຢູ່ເມືອງສະໜາມໄຊ ໃນໄລຍະແປດເດືອນ. ຮອດເດືອນທັນວາ 2019, ທີມດັ່ງກ່າວຄາດຫວັງວ່າ ຈະເກັບກູ້ລະເບີດທີ່ຕົກຄ້າງຈາກເນື້ອທີ່ດິນປະມານ 120 ເຮັກຕາ ຢູ່ເຂດບ້ານ ທີ່ຮັບຜົນກະທົບຈາກໄພນໍ້າຖ້ວມ ແລະ ເຂດອ້ອມຂ້າງ.

ນອກຈາກການສຳຫລວດ ແລະ ເກັບກູ້ລະເບີດ, UXO Lao ຍັງຈະຈັດການໂຄສະນາອົບຮົມ ກ່ຽວກັບຄວາມສ່ຽງ ກ່ຽວກັບລະເບີດບໍ່ທັນແຕກຢູ່ ແຂວງອັດຕະປື. ການສຳຫລວດທົ່ວແຂວງ ທີ່ບໍ່ທັນສຳເລັດ ກ່ອນນໍ້າຖ້ວມ ໄດ້ພົບເຫັນໃນ ເບື້ອງຕົ້ນວ່າ ເນື້ອທີ່ 12,225 ເຮັກຕາຢ່າງຕໍ່າ ເປັນເຂດອັນຕະລາຍ ເຊິ່ງຕ້ອງການການເກັບກູ້.

ທ່ານ ນາງ ເຈນ ແຊນເດີ, ອຸປະທູດ ສະຖານທູດ ອົດສະຕຣາລີ ປະຈຳ ສປປ ລາວ ໄດ້ເວົ້າວ່າ: "ການສະໜັບສະໜູນ UXO Lao ຢູ່ແຂວງອັດຕະປື ເປັນຜົນມາຈາກການລົງທຶນຫຼາຍໆປີຂອງພວກເຮົາໃນການຊ່ວຍລັດຖະບານລາວ ແກ້ໄຂສິ່ງທ້າທາຍຈາກບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ທີ 18.

ການສະໜອງທຶນເພີ່ມຕື່ມນີ້ ຈະຊ່ວຍປະກອບສ່ວນຕໍ່ດ້ານງົບປະມານທີ່ຕ້ອງການ ສຳລັບແຜນຟື້ນຟູຫຼັງໄພພິບັດ ແຫ່ງຊາດ ແລະ ຈະຊ່ວຍໃຫ້ UXO Lao ສາມາດສືບຕໍ່ພາກປະຕິບັດວຽກງານ ແລະ ເກັບກູ້ລະເບີດບໍ່ທັນແຕກ ອອກຈາກທີ່ດິນທີ່ມີລະເບີດຕົກຄ້າງ ເພື່ອຮັບປະກັນວ່າ ປະຊາຊົນແຂວງອັດຕະປື ສາມາດເຂົ້າເຖິງທີ່ດິນສຳລັບທີ່ຢູ່ ອາໄສ ແລະ ການຜະລິດກະສິກຳ ທີ່ປອດໄພ."

ທ່ານນາງ ຣິຄາຣດາ ຣິເອເກີ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ເວົ້າວ່າ: "ການຮ່ວມມື ຂອງອົງການສະຫະປະຊາຊາດ ເພື່ອການ ພັດທະນາກັບ ລັດຖະບານ ສປປ ລາວ ແຕ່ດົນນານ ໃນຂະແໜງລະເບີດ ບໍ່ທັນແຕກ ມີຄວາມສຳຄັນ ໂດຍສະເພາະ ເວລາທີ່ພວກເຮົາຮ່ວມມືກັນແກ້ໄຂ ບັນຫາໃນເວລາເກີດໄພພິບັດ. ພາຍຫລັງນໍ້າຖ້ວມປີຜ່ານມານີ້, ພວກຂ້າພະເຈົ້າ ຂໍຂອບໃຈທາງລັດຖະບານ ອົດສະຕາລີ ທີ່ໃຫ້ທຶນຕື່ມ ເພື່ອຮັບປະກັນປະຊາຊົນ ສາມາດດຳລົງຊີວິດ ຕໍ່ໄປໄດ້ ໂດຍປາດສະຈາກ ຄວາມຢ້ານກົວຕໍ່ລະເບີດບໍ່ທັນແຕກ."

ການຮ່ວມງານຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ໃນວຽກງານເກັບກູ້ລະເບີດບໍ່ທັນແຕກ ໄດ້ອີງໃສ ຫລັກການ ບໍ່ປະປ່ອຍຜູ້ໃດໄວ້ທາງຫຼັງ ແລະ ຄວາມຕັ້ງໜ້າທີ່ຈະບັນລຸຈຸດໝາຍການພັດທະນາແບບຍືນຍົງທີ 18 ວ່າດ້ວຍ *ຊີວິດທີ່ປອດໄພ ຈາກລະເບີດບໍ່ທັນແຕກ*.

**ສຳລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

*ທ່ານ ນາງ ອິດິໂກ ຮາໂມຊ໌ ໂຊໂລ*
*ຊ່ຽວຊານການສື່ສານ, ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ*
*ໂທ: 020 7717 7913, ອີເມວ: ildiko.hamos@one.un.org*

*ທ່ານ ສົມລິດ ຄູນປະເສີດ*
*ຜູ້ຊ່ວຍການສື່ສານ, ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ*
*ໂທ: 20 777 118 74, ອີເມວ: somlith.khounpaseuth@undp.org*